# ໂຄງການ <u>ການເມືອງລາວຍຸກໃໝ່ ເພື່ອປະຊາທິປະໄຕ</u>
# <u>ຂອງສ່ວນປະຊາຊົນ</u>

ໃນຣະບອບປະຊາທິປະໄຕ ແບບມີຫລັກການ ດັ່ງນີ້

ປະຊາຊົນຜູ້ມີອຳນາດອະທິປະໄຕ ໄຊ້ອຳນາດນັ້ນຜ່ານຕົວແທນ ຊຶ່ງເຂົ້າໄປທຳໜ້າທີ່ໃນຣັຖສະພາ

ການສະແດງອອກຊຶ່ງພົນປະໂຍດ ແລະຄວາມຄິດເຫັນຂອງປະຊາຊົນ ມີກຸ່ມພົນປະໂຍດ ແລະກຸ່ມອິດທິພົນຮອງຮັບ

ກຸ່ມອິດທິພົນແລະກຸ່ມພົນປະໂຍດ ກ່ຽວໂຍງສັມພັນກັບພັກການເມືອງ ໃນເຊ່ທີ່ພັກການເມືອງລວບລວມແລະຄັດສັນພົນປະໂຍດແລະຄວາມຄິດເຫັນໃນຮູບຂອງນະໂຍບາຍ

ກິດຈະກັມທາງການເມືອງ ດຳເນີນການໂດຍພັກການເມືອງ ຣັຖບານແລະຣັຖສະພາ

ການເລືອກຕັ້ງເປັນວິທີການດຽວ ທີ່ໄຊ້ການໄດ້ມາຊຶ່ງຕົວແທນຂອງປະຊາຊົນ

ພັກການເມືອງສາມາດເປັນໂຄງການຫລັກ ໃນການຕອບສນອງ ຄວາມຕ້ອງການຂອງປະຊາຊົນໄດ້

ປະຊາຊົນກຸ່ມອິດທິພົນ ແລະກຸ່ມພົນປະໂຍດຈະອາສັຍພັກການເມືອງ ເປັນຊ່ອງທາງຫລັກໃນການເຂົ້າເຖິງ ແລະມີສ່ວນຮ່ວມໃນການກຳໜົດນະໂຍບາຍ ພັກການເມືອງເປັນອົງກອນ ເປີດສະມາຊິກສາມານກຳໜົດທິດທາງການດຳເນີນງານໄດ້

ຈາກສົມມະຕິການດັ່ງກ່ວນີ້ ຣະບອບປະຊາທິປະໄຕຈຶ່ງໄດ້ກຳໜົດ ໃຫ້ພັກການເມືອງການເລືອກຕັ້ງແລະຣັຖສະພາ ເປັນສະຖາບັນທາງການເມືອງຫລັກ ແຕ່ໃນປັດຈຸບັນປະຊາຊົນມີການເຄື່ອນໄຫວເປັນເອກກະພາບ ແຍກຕົວອອກຈາກພັກການເມືອງ ຈຶ່ງກໍ່ໃຫ້ເກີດຄວາມແຕກຕ່າງຣະຫວ່າງ(ການເມືອງເກົ່າ)(ກັບ)(ການເມືອງລາວຍຸກໃໝ່) -ມີດັ່ງນີ້

ການເມືອງເກົ່າ -ຄື -ພັກການເມືອງເປັນອົງກອນດຽວ ທີ່ສາມາດສົ່ງຜູ້ສມັກເຂົ້າດຳຣົງຕຳແໜ່ງທາງການເມືອງ -ການເລືອກຕັ້ງທາງຕົງ ເປັນວິທີການດຽວໃນການໄດ້ຜູ້ແທນຣາສດອນ

ກິດຈະກັມທາງການເມືອງ ເປັນບົດບາດແລະນ້ຳໜັກທີ່ຫລັກ ຂອງຣັຖສະພາ -ການເລືອກ ຕັ້ງໄດ້ກາຍເປັນຜູ້ແທນຂອງພື້ນທີ່ ມີການໃຊ້ເງິນໃຊ້ອຳນາດຂົ່ມຂູ່ຫລາຍໃນການເລືອກຕັ້ງ

ການເຄື່ອນໄຫວຂອງປະຊາຊົນ ໄດ້ແຍກຕົວອອກຈາກພັກການເມືອງ -ພັກການ ເມືອງບໍ່ຍອມຮັບການເຄື່ອນໄຫວ ໂດຍຕົງຂອງປະຊາຊົນ -ພັກການເມືອງກໍ່ກາຍຶດກຸມໂດຍ ກຸ່ມທຶນທີ່ປະກອບດ້ວຍຄົນຈຳນວນນ້ອຍ

ການເມືອງລາວຍຸກໃໝ່ -ຄື -ກຸ່ມປະຊາຊົນທີ່ບໍ່ໃຊ້ພັກການເມືອງ ສົ່ງຜູ້ແທນເຂົ້າ ດຳຣົງຕຳແໜ່ງທາງການເມືອງໄດ້ -ການເລືອກຕັ້ງທາງຕົງເປັນພຽງວິທີການນຶ່ງເທົ່າ ນັ້ນ ໃນການໄດ້ຜູ້ແທນຣາສດອນ

ກິດຈະກັມທາງການເມືອງ ຈາກອົງກອນປະຊາຊົນໃນບົດບາດສຳຄັນ ການເປັນ ຕົວແທນອາສັຍກຸ່ມທາງສັງຄົມ -ເສຖກິດ -ການເມືອງດ້ວຍ -ທຶນມີບົດບາດນ້ອຍລົງ

ການເຄື່ອນໄຫວຂອງປະຊາຊົນ ເປັນກິດຈະກັມທາງການເມືອງທີ່ສຳຄັນ -ການເຄື່ອນ ໄຫວໂດຍຕົງຂອງປະຊາຊົນ ມີຜົນຕໍ່ການຕັດສິນໃຈທາງການເມືອງ -ການເມືອງມີການ ເປີດພື້ນທີ່ ຂອງການມີສ່ວນຮ່ວມຢ່າງກວ້າງຂວາງ

ຄວາມແຕກຕ່າງທີ່ສຳຄັນທີ່ສຸດກໍ່ຄື ການທີ່ປະຊາຊົນເຄື່ອນໄຫວໂດຍແຍກຕົວອອກ ຈາກພັກການເມືອງ ຊຶ່ງເປັນການທຳໃຫ້ສົມມະຕິການ ກຽວກັບຄວາມສັມພັນຣະຫວ່າງ ປະຊາຊົນກັບພັກການເມືອງແບບເດີມບໍ່ເປັນຄວາມຈິງອີກຕໍ່ໄປ -ເຫດທີ່ເປັນເຊັ່ນນີ້ກໍ່ເພາະ ພັກການເມືອງ ກາຍເປັນເຄື່ອງມືຂອງກຸ່ມທຸຣະກິດ ທີ່ມຸ້ງຮັກສາສະເພາະຜົນປະໂຍດຂອງ ຕົນ ຫລື ບໍ່ກໍ່ວາງແນວທາງສອງຮູຄື ໃຫ້ຜົນປະໂຍດກັບປະຊາຊົນ ຜ່ານໂຄງການປະຊາ ນິຍົມຄວບຄູ່ໄປ ກັບການສແວງຫາຜົນປະໂຍດໃຫ້ແກ່ -ຜູ້ກໍ່ຮຸ້ນ -ຂອງພັກການເມືອງນັ້ນ ຈົ່ນໃນທີ່ສຸດຜົນປະໂຍດຂອງຜູ້ນຳພັກການເມືອງ ກໍ່ຂັດແຍ່ງກັບຜົນປະໂຍດຂອງຊາດ

ເມື່ອປະຊາຊົນມີການເຄື່ອນໄຫວໂດຍຕົງ ການເຄື່ອນໄຫວມັກຈະບໍ່ກຽວກັບການ ຊວ່ງຊີງອຳນາດ ໃນການມີສ່ວນຮ່ວມຂອງປະຊາຊົນຈຶ່ງບໍ່ໃຊ້ເປັນໄປ

ໃນລັກສະນະດຽວກັບພັກການເມືອງ ເພາະຂາດມະຕິຂອງການແຂ່ງຂັນ ເພື່ອ
ໃຫ້ໄດ້ມາຊຶ່ງອຳນາດຣັຖ ກຸ່ມປະຊາຊົນຈຶ່ງກາຍເປັນຝ່າຍດ້ານນອກຣັຖສະພາ
ແລະແນ່ນອນຈະໄດ້ຮັບການຮັບຮອງສິດທິຕາມຣັຖທັມນູນ ແຕ່ກໍ່ຖືກທ້າທາຍຈາກ
ພັກການເມືອງໃນແງ່ຂອງຄວາມຊອບທັມ

ການທີ່ພັກການເມືອງລາວ ກັບກຸ່ມປະຊາຊົນຜູ້ຕື່ນຕົວທາງການເມືອງ ເຄື່ອນ
ໄຫວເປັນເອກພາບຕໍ່ກັນນີ້ ເປັນເພາະວິວັທນາການ ທາງການເມືອງຂອງລາວ
ເປັນເຊັ່ນນັ້ນກຸ່ມປະຊາຊົນມີຄວາມແຂງແຮງຫລາຍກວ່າພັກການເມືອງ -ຈຶ່ງ
ເກີດຄຳຖາມວ່າຫາກກຸ່ມປະຊາຊົນ ເຊັ່ນຂບວນການລາວອິສຣະເພື່ອປະຊາທິປະ
ໄຕບໍ່ແປກາຍເປັນພັກການເມືອງອີກພັກນຶ່ງ ແລ້ວເຂົ້າສູ່ການແຂ່ງຂັນທາງການ
ເມືອງພາບ ໂດຍຜ່ານການເລືອກຕັ້ງ ຈະມີວິທີການອື່ນໃດຫຼືບໍ່ ທີ່ຈະຮັບຮອງ
ຄວາມຊອບທັມ ຂອງກຸ່ມປະຊາຊົນທີ່ບໍ່ຕ້ອງການເປັນພັກການເມືອງ

ບັນຫາກໍ່ຄື ກຸ່ມປະຊາຊົນປະເພດນີ້ທີ່ມີການຈັດຕັ້ງ ມີຜູ້ນຳຂອງຕົນເອງ
ໂດຍແຍກຕົວອອກຈາກພັກການເມືອງຢ່າງດີ ພັກການເມືອງກໍ່ສາມາດ
ເປັນແຕ່ ລາວອິສຣະຊົ່ວຄາວ -ກຸ່ມປະຊາຊົນເທົ່ານັ້ນ

ການພົນເອົາກຸ່ມປະຊາຊົນເຂົ້າມາຢູ່ເປັນສ່ວນນຶ່ງ ຂອງຣະບົບແລະກະບວນການທາງ
ການເມືອງທີ່ເປັນການ ອາດທຳໃຫ້ການເຄື່ອນໄຫວຂອງປະຊາຊົນ ມີຂອບເຂດຈຳກັດ
ດັ່ງນັ້ນ -ວິທີການທີ່ດີກໍ່ຄື ການຍອມຮັບສິດທິທາງການເມືອງ ຂອງກຸ່ມປະຊາຊົນໄວ້ໃນ
ຣັຖທັມນູນ ແລະຕ້ອງມີການຄຸ້ມຄອງສິດທິນັ້ນ ໂດຍສານປົກຄອງແລະສານຍຸຕິທັມດ້ວຍ

ການເມືອງລາວຍຸກໃໝ່ໜ້າຈະເປັນ -ການເມືອງແບບທັມມະຊາດ -ບໍ່ໄຊ້ການເມືອງ
ແບບທາງການ -ການເມືອງແບບທັມະຊາດນີ້ ເກີດຈາກຄວາມຮູ້ສຶກຮ່ວມກັນແລະເປັນ
ການເມືອງທີ່ບໍ່ກຽ່ວກັບການແຂ່ງຂັນເພື່ອຊ່ວງຊີງອຳນາດ ດັ່ງນັ້ນບົດບາດອັນສຳ
ຄັນຂອງການເມືອງລາວຍຸກໃໝ່ ຈຶ່ງໜ້າຈະເປັນອຳນາດອ້າງອີງ
ກວ່າງດຶງ ຕຣວດສອບຫລາຍກວ່າຢ່າງອື່ນ

ບົດບາດຂອງການເມືອງລາວຍຸກໃໝ່ ອາດບໍ່ໄຊ້ການທົດແທນການເມືອງແບບເກົ່າ

ແຕ່ເປັນໄປໃນເຊີ່ງຕຣວດສອບຄັດຄ້ານ ຈົນລົດຣະຄວາມຊົ່ວຂອງການເມືອງເກົ່າໄດ້ ໂດຍສະເພາະຢ່າງຍິ່ງ ໃນຍາມທີ່ພັກດຽວມີອຳນາດຫລາຽນັ້ນ ສາມາດຣວມພັກເລັກໆ ນ້ອຍໆໄວ້ໄດ້ ໂດຍພັກຝ່າຍຄ້ານບໍ່ມີທາງອາສັຍ ໂຄງການຣັກສະພາດຳເນີນການ ຕຣວດສອບກວ່າງດຶງ -ຜເດັດການຄອມມີນິສສຽງຂ້າງຫລາຽ ໄດ້

ດັ່ງນັ້ນ ການເມືອງລາວຍຸກໃໝ່-ຈຶ່ງມີບົດບາດອັນສຳຄັນທີ່ສຸດ ໃນການຕໍ່ຕ້ານ ຜເດັດການຄອມມີນິສວຽດນາມ ໂດຍໃຊ້ພັກດຽວປົກຄອງປະເທດ ທີ່ປະຊາຊົນບໍ່ເຫັນພ້ອມ ແຕ່ທຳການຫຍັງບໍ່ໄດ້

## <u>ປະຊາທິປະໄຕເປັນເອກລັກຂອງລາວຍຸກໃໝ່</u>

ປະເທດລາວໃນວັນນີ້ ສັງຄົມລາວໄດ້ກ້າວເຂົ້າສູ່ຈຸດການປຽ່ນແປງ ທາງປະວັດສາດ ຄັ້ງສຳຄັນ ອັນເປັນຜົນຂອງການປຽ່ນແປງທາງການເມືອງ ຈາກການເມືອງຜເດັດການຄອມມີນິສ ທັງຣັກສະພາກຸ່ມທຶນຄອມມີນິສ -ມາເຂົ້າສູ່ການເມືອງປະຊາທິປະໄຕ ຂອງປະຊາຊົນ ໃນຣະບອບປະຊາທິປະໄຕ ອັນມີຊາດ ສາສນາ ພຣະມະຫາກະສັດແລະ ປະຊາຊົນເປັນເຈົ້າຂອງປະເທດ ໂດຍອຳນາດປະຊາຊົນຊຶ່ງເປັນອຳນາດໃໝ່ ຍິ່ງໃຫ່ຽ ກວ່າອຳນາດກຸ່ມທຶນ ຈະສະແດງບົດບາດເປັນປັດຈັຍ ກຳໜົດກະບວນການປຽ່ນແປງ ຄັ້ງປະວັດສາດນີ້

## <u>ບົດວິນິດສັຍ-ອຳນາດລາວຍຸກໃໝ່ ສ້າງການເມືອງໃໝ່</u>

ກະບວນການເກີດຂຶ້ນຂອງການເມືອງລາວຍຸກໃໝ່ ບໍ່ໄດ້ເດີ້ມຕົ້ນຫຼືອອກແບບ ຈາກຫລັກການຫຼືທິດສະວັດໃນຕຳຣາ ແຕ່ອຸບັດຂຶ້ນຈາກສະພາວະເປັນຈິງ ຂອງສັງ ຄົມລາວຍຸກໃໝ່ ສະທ້ອນຄວາມຈຳຕອ້ງເປັນໄປຕາມກົດເກນ ການພັທນາຂອງສັງ ຄົມລາວຍຸກໃໝ່ ຊຶ່ງມີອົງປະກອບສຳຄັນສອງດ້ານຄື ຄວາມເປັນໄປໄດ້ທາງພາວະວິ ສັຍ(**ເງື່ອນໄຂພາຍນອກ**)ແລະຄວາມພ້ອມທາງດ້ານອັດຕະວິສັຍ(**ຄືປັດຈັຍພາຍໃນ**)

ດວັຍວິທີຄິດນີ້ ຂໍໃຫ້ພວກເຮົາມາທຳຄວາມເຂົ້າໃຈກັນ ໃນເຣື່ອງການປຽ່ນແປງທາງ ການເມືອງຂອງປະເທດລາວ ກຳລັງດຳເນີນໄປຢ່າງໄວວັນໄວເດືອນ ເຣີ້ມຕັ້ງແຕ່ປີ-00 25-5-ມາເຖິງປີ-08-25-5-ໃນທິດທາງ

ທີ່ສ່ວນປະຊາຊົນສະສົມໄຊຊະນະ ໄດ້ຢ່າງຕໍ່ເນື່ອງມາໃນການຕໍ່ສູ້ກັບກຸ່ມການເມືອງ ທຶນສາມານຄອມມິນິສ ທາງຂບວນການ ການເມືອງສ່ວນປະຊາຊົນນີ້ ນຳໂດຍຂບວນການລາວອິສຣະເພື່ອປະຊາທິປະໄຕ ນັບວັນເຕີບໃຫ່ຽຂຍາຍຕົວເຂັ້ມແຂງຂຶ້ນເຣື້ອຍໆ ໄດ້ຮັບການຍອມຮັບຈາກມວນຊົນ ທີ່ຕື່ນຕົວຂຶ້ນມາທຸກໆຄົນທົ່ວປະເທດແລະໃນຕ່າງປະເທດ ຄະນະທີ່ກຸ່ມທຶນສາມານຜເດັດການຄອມມິນິສວຽດນາມ ພະຍາຍາມສະກັດຂັດຂວາງການຕໍ່ສູ້ເຕັມທີ

ໃນການະເວລານີ້ ອຳນາດຂອງປະຊາຊົນລາວໄດ້ປະກົດຂຶ້ນ ຢ່າງເປັນຮູບທັມ ປະຊັນກັບອຳນາດພັກຮັກກຸ່ມທຶນຜເດັດການ ມີແນວໂນ້ມທີ່ຈະສະແດງບົດບາດຜູ້ນຳແລະກຳກັບກະບວນການປຽ່ນແປງທາງການເມືອງຂອງປະເທດລາວ ທີ່ຊັດເຈນຂຶ້ນເຣື້ອຍໆ ໂດຍກຸ່ມອຳນາດຕ່າງໆ ໃນສັງຄົມຄ່ອຍໆໄດ້ປັບຕົວເຂົ້າຫາກັນ ເພື່ອປະກອບເຂົ້າເປັນສ່ວນນຶ່ງ ຂອງອຳນາດການເມືອງລາວຍຸກໃໝ່ ທີ່ມີຂບວນການ ການເມືອງສວນປະຊາຊົນເປັນແກ່ນນຳ ຕາມແນວທາງ -ສ່ວນປະຊາຊົນເປັນເຈົ້າພາບເຈົ້າສັດທາ

ເບິ່ງໃຫ້ເກິງທີ່ສຸດແລ້ວ ການປຽ່ນແປງທາງການເມືອງຄັ້ງນີ້ ຂອງປະເທດລາວ ນອກຈາກແຮງກະຕຸ້ນຂອງ -ຍຸກເອເຊັຽ -ຊຶ່ງເປັນເຫດປັດຈັຍສຳຄັນພາຍນອກແລ້ວ ມີສາຍເຫດສຳຄັນໂກຍຕົງຈາກ -ພາຍນອກ -ອັນເປັນຄວາມຂັດແຍ້ງຫລັກຂອງປະເທດ ຣະຫວ່າງກຸ່ມທຶນສາມານຜເດັດການຄອມມິນິສວຽດນາມ -ຂບວນການເມືອງສ່ວນປະຊາຊົນ ທີ່ມີຂບວນການລາວອິສຣະເພື່ອປະຊາທິປະໄຕ ເປັນແກ່ນນຳ

ຄວາມຈິງແລ້ວ ໃນຣະຍະເດີ້ມແຣກໆ ທີ່ຍັງບໍ່ມີການຮ່ວມຕົວກັນເຂົ້າເປັນ ຂບວນການລາວອິສຣະເພື່ອປະຊາທິປະໄຕນັ້ນ ຄວາມຂັດແຍ້ງໃນຫລັກດຳເນີນໄປໃນຣະຫວ່າງກຸ່ມທຶນໃໝ່(ຕໍ່ມາກາຍພັນເປັນກຸ່ມທຶນສາມານໃນຣະບອບຄອມມິນິສ) -ກັບກຸ່ມທຶນເກົ່າ -ປະກອບດ້ວຍທຶນເຊື້ອເຈົ້າພະຍາທັງຫລາຽ -ແລະທຶນເຊື້ອແກວວຽດມິນທົ່ວໄປ -ແຕ່ດ້ວຍຄວາມອອ່ນລ້າຂອງກຸ່ມທຶນເກົ່າ ທຳໃຫ້ກຸ່ມທຶນໃໝ່ຜອມຕົວຢ່າງຮວດເຣັວແລະພັທນາມາສູ່ຄວາມເປັນທຶນສາມານຜເດັດການຄອມມິນິສວຽດນາມ ແລະທຳທ່າຈະຫຸບເອົາປະເທດລາວ ໄວ້ໃນກັມມືຢ່າງງ່າຍດາຍ ລາວເຣົາຕາຍບໍ່ດາບ

ກາມວ່າ ການຜູກຂາດປະເທດລາວ ຂອງກຸ່ມທຶນສາມານຜເດັດການ ຄອມມິ
ນິສ ທີ່ມີຫລາຽດວ້ຍວິທີການສໍ້ສົນເອົາແຕ່ໄດ້ ແມ່ນຈະສາມາດສິດສວຍໂອກາດແລະ
ຊ່ອງວ້າງ ໃນຣະບອບປະຊາທິປະໄຕ ອັນມີຊາດ ສາສນາ ພຣະມະຫາກະສັດແລະປະ
ຊາຊົນລາວເປັນເຈົ້າຂອງປະເທດ ເສີມສ້າງອໍານາດເບັດເສັດເໜືອພັກຣັຖ ແຕ່ພຶດຕິກັມ
ຂອງກຸ່ມທຶນສາມານຜເດັດການ ໃນຣະບອບຄອມມິນິສວຽດນາມ ມາສວນທາງຢ່າງຍິ່ງ
ກັບກະບວນການພັທນາທາງການເມືອງ ຂອງກຸ່ມປະເທດກ້າວໜ້າໃນຍ່ານເອເຊັຽແປ
ຊິຟິກ ທີ່ມຸ້ງໄປໃນທິດທາງການສນອງຕອບຕໍ່ຜົນປະໂຍດຂອງປະຊາຊົນ ບໍ່ເຄົາຣົບສິດ
ທິປະໂຍດຂອງປະຊາຊົນ ເນັ້ນຄວາມປົ່ງໃສຂອງຣັຖບານແລະຄວາມເປັນທັມມາພິບານ
ໃນການໃຊ້ອໍານາດຂອງໂຄງການຣັຖ

ທີ່ສໍາຄັນຄື ກຸ່ມທຶນສາມານຜເດັດການ ໃນຣະບອບຄອມມິນິສວຽດນາມ ໄດ້ຈົງໃຈ
ທໍາລາຍຖານອໍານາດທີ່ມີຢູ່ເດີມ ລົງໄປຢ່າງສິ້ນເຊີງ ໂດຍການສະກາປານາອໍານາດການ
ເມືອງ ເໜືອອໍານາດນິຕິບັນຍັດ ແລະອໍານາດຕຸລາການ

ພາຍຫລັງພັກແນວລາວຣັກຊາດ ໄດ້ໄຊຊະນະການເລືອກຕັ້ງທົ່ວໄປແລະເຂົ້າເປັນ
ຣັຖບານປົກຄອງຣະບອບຄອມມິນິສ ໃນປີ-1975-ກໍ່ໄດ້ເຣັ່ງດໍາເນີນການຜູກຂາດອໍານາດ
ຜເດັດການໄວ້ໃນກໍາມື ດວ້ຍວິທີການຊື່ບຸກຄະລາກອນໃນໂຄງການຣັຖ ແປງຊັບສິນຂອງ
ຊາດຂອງປະຊາຊົນມາເປັນຂອງຕົວເອງ ໃຊ້ໂຄງການເລືອກຕັ້ງແລະໃຊ້ສານປະຊາຊົນ
ເປັນເຄື່ອງມື ຄວບຄຸມສະພາຜູ້ແທນຣາສດອນແລະວຸດທິສະພາ ຈຶ່ງເກີດແຮງຕ້ານຈາກ
ທຸກຝ່າຍໂດຍສະເພາະຢ່າງຍິ່ງ ຈາກຂບວນການ ການເມືອງສວ່ນປະຊາຊົນທີ່ແນມເຫັນ
ຄວາມຫາຍະນະ ທີ່ຈະເກີດແກ່ປະເທດຊາດແລະປະຊາຊົນ

ໂດຍສະເພາະແນວຄິດປຽ່ນຣະບອບການປົກຄອງ ຈາກຣະບອບປະຊາທິປະໄຕ ອັນ
ມີຊາດ ສາສນາ ພຣະມະຫາກະສັດແລະປະຊາຊົນເປັນເຈົ້າຂອງປະເທດ ໄປເປັນຣະບອບ
ການປົກຄອງໃນຣະບອບສາທາຣະນະຣັຖປະຊາທິປະໄຕ ຊຶ່ງເປັນຄວາມ-ກວີນຫາ-ຕາມ
ໃຈຍາກຫລາຽກວ່າ ທີ່ຈະເຄົາຣົບກົດເກນການພັທນາຂອງສັງຄົມລາວ ບໍ່ສອດຄອ້ງຢ່າງ
ຍິ່ງກັບລັກສະນະສັງຄົມລາວ ແລະເປັນອຸປສັກຣາ້ຍແຮງຕໍ່ການພັທນາການ ທາງການ
ເມືອງຂອງປະເທດລາວ ທີ່ຈໍາເປັນຕອ້ງພັທນາໄປຕາມທິດທາງພັທນາການທາງການ

ເມືອງຂອງປະເທດ ເອເຊັຽແປຊີຟິກ -ໃນຍຸກເອເຊັຽທີ່ເນັ້ນຄວາມເປັນປະຊາທິປະໄຕຂອງປະຊາຊົນ ເນັ້ນຄວາມໂປ່ງໃສຄວາມເປັນທັມມາພິບານ ຄຳນຶງເຖິງການພັທນາຄຸນນະພາບຊີວິດຂອງປະຊາຊົນ ແລະການເປີດຊ່ອງໂອກາດໃຫ້ແກ່ປະຊາຊົນໃນການພັທນາຊີວິດຂອງຕົນເອງ ໃຫ້ສົມບູນຮອບດ້ານແທ້ໆ ເພື່ອໃຫ້ປະຊາກອນຂອງປະເທດຂອງຕົນເປັນປະຊາກອນຄຸນນະພາບ ສາມາດດຳຣົງຊີວິດຢູ່ໄດ້ເປັນຢ່າງດີບົນພື້ນໂລກດວງນີ້

ພຶດຕິກັມຂອງກຸ່ມສາມານຜເດັດການລາວໃນຣະບອບຄອມມິນິສວຽດນາມ ບໍ່ງບອກເຖິງຄວາມໂລບຈົ່ນໜ້າມືດຫລາຽກວ່າສິ່ງອື່ນໃດ ເຕັມໄປດ້ວຍພຶດຕິກັມສໍ້ສົນແລະສວຍໂອກາດ ຄຳນຶງແຕ່ຜົນປະໂຍດຕົນຊນິດ -ໄຮ່ຢ່າງອາຍ -ບອ້ຍຄົນໝັກທີ່ຈະເຂົ້າຮ່ວມດ້ວຍ ຍົກເວັ້ນກຸ່ມຄົນທີ່ໄດ້ສເວີຍປະໂຍດມະຫາສານ ຈາກການສະກາປະນາຣະບອບຄອມມິນິສວຽດນາມ ຮ່ວມທັງບັນດາ -ລີ່ວລໍ້ -ທີ່ກຸ່ມທຶນຄອມມິນິສວຽດນາມຊຸບລ້ຽງໄວ້ໃຊ້ງານເໝືອນດັ່ງຄວາຍໄກນາ -ຊຶ່ງມີຈຳນວນຈຳກັດແລະນັບວັນຈະຕາຍຊາກໄປ ຫາມີຊີວິດຊີວາແຕ່ປະການໃດບໍ່ໄດ້

ເບິ່ງໃນມຸມທີ່ກວ້າງຂື້ນ ບົນການທີ່ໃຫ່ຽຂື້ນ ພຶດຕິກັມແລະຄວາມຄິດຂອງພວກເຂົາຫາໄດ້ສະທອ້ນ ເຖິງວິສັຍທັດອຸດົມການທີ່ -ກາ້ວໜ້າ -ແຕ່ປະການໃດບໍ່ໄດ້ -ໝຳຊໍ້າມັນໄດ້ຫລຸດລອດອອກຈາກການ ແຫ່ງຄວາມເປັນຈິງຢ່າງຊິ້ນເຊີງ ທັ້ງຂອງປະເທດລາວແລະຂອງສັງຄົມໂລກ ໂດຍຮວມທຸກສິ່ງທຸກຢ່າງທີ່ພວກເຂົາທຳກັນຄິດກັນ ລວ້ນເປັນຂອງຄວາມຕອ້ງການສະເພາະຕົວ ອັນໄຮ້ຂີດຈຳກັດ ອັນເປັນຜົນຂອງການທຳງານ ຂອງຈິດໃຝຕ່ຳທີ່ເອີ້ນວາ່ -ໂລບ -ກັບ -ຫລົງ -ຫາໄດ້ຍຶດໝັ້ນໃນຄວາມເປັນຈິງ ເຄົາຣົບຄວາມເປັນຈິງ ຫາໄດ້ຍຶດໝັ້ນໃນຜົນປະໂຍດຂອງຄົນສວ່ນໃຫ່ຽ ເຄົາຣົບສັກສີຄວາມເປັນມະນຸດ ແຕ່ປະການໃດບໍ່ໄດ້

ສິ່ງພວກເຂົາເອີ້ນວາ່ -ປະຊາທິປະໄຕນັ້ນ -ກໍ່ເປັນພຽງຂໍ້ອາ້ງສຳຫລັບການໃຊ້ອຳນາດ ແບບເບັນເສດທໍ່ນັ້ນເອງ

ຈຶ່ງຍອ່ມບໍ່ໄດ້ຮັບການສນັບສນູນ ຈາກຄົນທົ່ວໄປທີ່ຮັກຊາດ -ຮັກປະຊາທິປະໄຕແລະຮັກຄວາມເປັນທັມ

ທັງໝົດນີ້ຄືເຫດປັດຈັຍ ເບື້ອງຕົ້ນຂອງການປຽ່ນແປງເປັນການ-ປູພື້ນການສ້າງສາຍການພົວພັນໃຫ້ແກ່ຂບວນການ ການເມືອງສວ່ນປະຊາຊົນຂື້ນມາເຕັ້ນແລ່ນສະແດງບົດບາດຜູ້ນຳ ຊຶ່ງກໍ່ຄືການເປັນເຈົ້າພາບເຈົ້າສັດທາຕົວຈິງ-ໃນການປຽ່ນແປງທາງການເມືອງ ທີ່ປະເທດລາວຈຳຕອ້ງເປັນໄປ ຕາມແນວໂນ້ມພັທນາການຂອງໂລກ ໃນຍຸກເອເຊັຽນີ້

ທີ່ນີ້ ເມື່ອອຳນາດການປຽ່ນແປງທາງການເມືອງ ຕົກຢູ່ໃນກັມມືຂອງຂບວນການການເມືອງສວ່ນປະຊາຊົນແລ້ວ ການປັບການະຄຸນອຳນາດສາມຝາ່ຍ ໃນຣະບອບປະຊາທິປະໄຕ ອັນມີຊາດ ສາສນາ ພຣະມະຫາກະສັດແລະປະຊາຊົນເປັນເຈົ້າ ກໍ່ສາມາດທຳໄດ້ ໂດຍເພີ້ມອຳນາດຂອງສວ່ນປະຊາຊົນ ເຂົ້າໄປໃນໂຄງສ້າງດຸນອຳນາດສາມຝາ່ຍໃຫ້ອຳນາດສວ່ນປະຊາຊົນຄົງໄວ້ຊຶ່ງການະຂອງຄວາມເປັນເຈົ້າຂອງປະເທດຢາ່ງຍັ້ງຍືນ

ໃນຮູບທັມກໍ່ຄື ການໃດທີ່ກຽ່ວກັບການບໍຣິຫານປະເທດ-ແມ່ນໂດຍຣັຖບານປະຊາຊົນ ການກຳໜົດຕົວບົດກົດໝາຽ-ໂດຍສະພາປະຊາຊົນ-ແລະການຕັດສິນຄະດີຄວາມກໍ່ແມ່ນສານປະຊາຊົນ-ຈະຕອ້ງຖືເອົາພົນປະໂຍດຂອງປະຊາຊົນເປັນຕົວຕັ້ງ ສເນີຄວາມຍຸຕິທັມ ຈະຕອ້ງຢູ່ເທິງການຮວ່ມກັນ ຄື ພົນປະໂຍດຂອງປະຊາຊົນລາວ

ຫົວໃຈ-ຂອງການເມືອງລາວຍຸກໃໝ່ ໃນຣະບອບປະຊາທິປະໄຕອັນມີຊາດ ສາສນາພຣະມະຫາກະສັດແລະປະຊາຊົນເປັນເຈົ້າຂອງປະເທດ ກໍ່ຄືຂບວນການເມືອງສວ່ນປະຊາຊົນນຳໂດຍຂບວນການລາວອິສຣະເພື່ອປະຊາທິປະໄຕ ເປັນເຈົ້າຂອງປະເທດ ໃນການໃຊ້ອຳນາດຮວ່ມກັບຕົວແທນພາກຣັຖແລະເອກຊົນ ທຳການປຶກສາຫາລືຮວ່ມກັນຈັດທຳຣະບົບກຳກັບ-ກຳໜົດທິດທາງການພັທນາທາງການເມືອງ ທາງການເສຖກິດສັງຄົມ ຂອງປະເທດລາວຍຸກໃໝ່-ວາງຮາກການທີ່ຍັ້ງຍືນໃຫ້ແກ່ກະບວນການພັທນາຂອງການເມືອງລາວຍຸກໃໝ່ ໃນຣະບອບປະຊາທິປະໄຕ ອັນມີຊາດ ສາສນາພຣະມະຫາກະສັດແລະປະຊາຊົນເປັນເຈົ້າ

ທັງນີ້ ການທີ່ຂບວນການ ການເມືອງສວ່ນປະຊາຊົນເປັນເຈົ້າ-ຮວ່ມກັບພາກສວ່ນຕາ່ງ ໆ ກຳກັບໃຊ້ອຳນາດ ໂດຍຖືເອົາພົນປະໂຍດຂອງປະຊາຊົນເປັນຕົວຕັ້ງແລ້ວ

ຮັກສາໄວ້ ຊຶ່ງສະກຸາບັນຊາດ ສາສນາ ພຣະມະຫາກະສັດແລະປະຊາຊົນ ຕຣອດໄປ ນັ້ນ ມີຄວາມແຕກຕ່າງໄປຈາກການໃຊ້ອຳນາດຜເດັດການໂດຍຊົນຊັ້ນກັມມາຊີບ ດັ່ງທີ່ເປັນຢູ່ທົ່ວໄປໃນກຸ່ມປະເທດສັງຄົມນິຍົມ ຊຶ່ງບາງທີ່ພວກເຂົາກໍ່ເອີ້ນ ຣະບອບການເມືອງຂອງພວກເຂົາເອງວ່າ ເປັນປະຊາທິປະໄຕປະຊາຊົນ ພວກເຮົາຈຶ່ງມາເອີ້ນການເມືອງລາວຍຸກໃໝ່ໃນຣະບອບປະຊາທິປະໄຕອັນມີຊາດ ສາສນາພຣະມະຫາກະສັດແລະປະຊາຊົນເປັນເຈົ້າ ພວກເຮົາຈຶ່ງເອີ້ນວ່າເປັນປະຊາທິປະໄຕ ປະຊາຊົນເປັນເຈົ້າຂອງປະເທດ

ການເມືອງໃໝ່ຍຶດໃນຫລັກປະຕິບັດຕົນ ໃຫ້ຢູ່ໃນສິນຫາ້ກໍ່ພຽງພໍ -ຄຳຕອບວ່າ ກຸ້ຜິດຂໍ້ໃດຂໍ້ນຶ່ງກໍ່ບໍ່ໄດ້ ເມື່ອເກີດເຫດຂຶ້ນຜົນຈາກກະບວນການຍຸຕິທັມ ຕັດສິນແລ້ວວ່າ ຜິດຈິງຕອ້ງໄດ້ຮັບໂທດເດັດຂາດ ຫາ້ທຳງານການເມືອງຕຣອດຊີວິດ ເພາະບໍ່ເຊັ່ນນັ້ນກໍ່ຈະວົນວຽນກັບມາອີກ ການຈະເຂົ້າມາບໍຣິຫານບາ້ນເມືອງ ຕອ້ງເປັນຄົນດີ ທັງກາຍແລະໃຈ

ຂໍຝາກຂໍ້ຄວາມເກົ່າ ຂບວນການລາວອິສຣະ ໃນອະດີດແລະປັດຈຸບັນ ການປາສັຍໃນຈຸດຕາ່ງ ໆຢາ່ເວົ້າຕົວະໃຫ້ເວົ້າແຕ່ເຣື່ອງຈິງ ເທົ່າທີ່ຟັງບາງເຣື່ອງຂີ້ຕົວະສາ້ງເຣື່ອງເໝືອນເລັ້ນກິລາ ພວກໝຸ່ມນອ້ຍເຂົ້າເຈົ້າຟັງແລ້ວຍັງຮູ້ວາ່ເປັນເຣື່ອງຂີ້ຕົວະ ເຮົາຕອ້ງເປັນຕົວຢາ່ງທີ່ດີແກ່ເຍົາວະຊົນ ເມື່ອຈະປຽນການເມືອງໃໝ່ ຕອ້ງປຽ່ນທີ່ຕົວເຮົາກອ່ນ ກຸ້ຈະສາ້ງຄາຍຄວາມຄຽດຄວນເລັ້ນຕຣົກປະຊົດ ນັກການເມືອງຊົ່ວ ໆບໍ່ໃຊ້ເວົ້າຂີ້ຕົວະເພື່ອຊວນເຊື່ອເທົ່ານັ້ນ ແລ້ວໃຫ້ໄປຫາຟັງເພງ ໄປຫາຄົນເດັກດີ ໄປຫາຂອງສັນສະນີ ໄປຫານາຄະພົງ ມາເປີດໃຫ້ທຸກ ໆຄົນຟັງເນື້ອເພງດີຫລາຽ ກຸ້ໃຜຟັງເພງນີ້ແລ້ວຄິດບໍ່ໄດ້ ກໍ່ບໍ່ຄວນເກີດມາເປັນຄົນແລ້ວ ການເມືອງໃໝ່ນີ້ ຄື ການສາ້ງຄວາມເປັນທັມໃຫ້ກັບສັງຄົມ ເມື່ອມີຄວາມເປັນທັມ ກັບສັງຄົມແລ້ວ ຈຶ່ງຈະເກີດປະຊາທິປະໄຕ

ຈາກສູນກາງ ສັນພູໝອກ ທີ່ນະຄອນວຽງຈັນ

ໃນນາມລາວອິສຣະ ວັນທີ-25-5-00